International Labour Organization

# ມາດຕະຖານແຮງງານສາກົນກ່ຽວກັບຜູ້ອອກແຮງງານໃນຄົວເຮືອນຈະໄດ້ຍົກຂຶ້ນມາເປັນຫົວຂໍ້ສຳຄັນ ໃນກອງປະຊຸມປຶກສາຫາລື ລະຫວ່າງ ພາກລັດ, ອົງການຜູ້ຕາງໜ້າຜູ້ໃຊ້ແຮງງານ ແລະ ອົງການຜູ້ຕາງໜ້າຜູ້ອອກແຮງງານ ຢູ່ ສປປລາວ.

**ຜົນຂອງການປະຊຸມອາດເປັນການປະກອບສ່ວນໃຫ້ແກ່ການສ້າງມາດຖານແຮງງານສາກົນວ່າດ້ວຍການປົກປ້ອງຜູ້ອອກແຮງງານໃນຄົວເຮືອນໃນອະນາຄົດ.**

ຫ້ອງການ ILO ວຽງຈັນ - ຜູ້ຕາງໜ້າຈາກພາກລັດ, ອົງການຜູ້ຕາງໜ້າຜູ້ໃຊ້ແຮງງານ ແລະ ອົງການຜູ້ຕາງໜ້າຜູ້ອອກແຮງງານຂອງ ສປປລາວ ໄດ້ຮ່ວມປະຊຸມປຶກສາຫາລືກັນຢ່າງເປັນທາງການກ່ຽວກັບການປະກອບຄວາມຄິດເຫັນໃສ່ຮ່າງມາດຕະຖານແຮງງານສາກົນສະບັບທຳອິດທີ່ຈະເປັນເຄື່ອງມືປົກປ້ອງຜູ້ອອກແຮງງານໃນຄົວເຮືອນຫລາຍລ້ານຄົນຢູ່ໃນທົ່ວໂລກ.

ຢູ່ໃນສປປລາວ, ກໍຄືຢູ່ໃນປະເທດອື່ນໆ, ເຫັນວ່າຍັງບໍ່ທັນມີການປົກປ້ອງຜູ້ອອກແຮງງານໃນຄົວເຮືອນຢ່າງເປັນລະບົບເທື່ອ ຈຶ່ງເປັນບັນຫາທີ່ໜ້າເປັນຫ່ວງທີ່ມີມາແຕ່ດົນນານຂອງບັນດາອົງການຈັດຕັ້ງສິດທິມະນຸດ ແລະ ອົງການປົກປ້ອງສິດທິໃນການອອກແຮງງານໃນທົ່ວໂລກ, ແລະ ຜ່ານມານັ້ນ ສ່ວນຫລາຍກໍຍັງເຂົ້າໃຈວ່າ ວຽກງານໃນຄົວເຮືອນບໍ່ແມ່ນ"ການຈ້າງງານແບບອາຊີບ".

ເພື່ອແກ້ໄຂກັບບັນຫາທີ່ມີໜ້າເປັນຫ່ວງດັ່ງກ່າວນີ້, ອົງການແຮງງານສາກົນ (ILO)[1] ຈະໄດ້ຍົກເອົາບັນຫານີ້ຂື້ນມາເປັນຫົວຂໍ້ໃນລາຍການຂອງກອງປະຊຸມປະຈຳປີຂອງອົງການແຮງງານສາກົນທີ່ຈະຈັດຂຶ້ນໃນປີ 2010 ດ້ວຍຄວາມຫວັງວ່າຈະສ້າງເປັນສົນທິສັນຍາສາກົນ ຫລື ເປັນບົດແນະນຳສາກົນສະບັບໃໝ່. ກອງປະຊຸມປຶກສາຫາລືທີ່ຈະຈັດຂຶ້ນຢູ່ນະຄອນ ຫລວງວຽງຈັນຄັ້ງນີ້ ຈະເປັນການກະກຽມການປະກອບຄວາມຄິດເຫັນຂອງ ສປປລາວ ໃຫ້ແກ່ກອງປະຊຸມສາກົນ ທີ່ຈະມີຂຶ້ນໃນປີໜ້າ.

ກອງປະຊຸມປຶກສາຫາລືກ່ຽວກັບການສ້າງວຽກເຮັດທີ່ຄຸນຄ່າສຳລັບຜູ້ອອກແຮງງານໃນຄົວເຮືອນຈະຈັດຂຶ້ນຢູ່ໂຮງແຮມເສດຖາພາເລດ,ນະຄອນຫລວງວຽງຈັນແມ່ນວັນທີ 15 ກັນຍາ 2009. ກອງປະຊຸມຄັ້ງນີ້ຈະມີຜູ້ເຂົ້າຮ່ວມຈາກ

---

[1] ອົງການແຮງງານສາກົນ ແມ່ນອົງກອນນຶ່ງຂອງ ສປຊ ທີ່ເຮັດໜ້າທີ່ກ່ຽວກັບ ວຽກເຮັດງານທຳ ແລະ ສະຖານທີ່ເຮັດວຽກ. ເປັນອົງກອນທີ່ປະກອບດ້ວຍສາມພາກສ່ວນສຳຄັນຄື ລັດຖະບານ, ອົງການຜູ້ອອກແຮງງານ ແລະ ອົງການຜູ້ໃຊ້ແຮງງານ ຈາກຫລາຍກວ່າ180 ປະເທດ.

ພາກສ່ວນຕ່າງໆ, ເຊັ່ນ: ຜູ້ຕາງໜ້າຈາກພາກລັດ, ຜູ້ຕາງໜ້າຈາກອົງການຜູ້ໃຊ້ແຮງງານ, ຜູ້ຕາງໜ້າອົງການຜູ້ອອກແຮງງານ ແລະ ບັນດາອົງການຈັດຕັ້ງສາກົນ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ. ຜູ້ເຂົ້າຮ່ວມປະຊຸມພ້ອມກັນປຶກສາຫາລືຄົ້ນຄວ້າ ກ່ຽວກັບເນື້ອໃນກົດໝາຍ ແລະ ພາກປະຕິບັດຕ່າງໆໃນການປົກປ້ອງຜູ້ອອກແຮງງານໃນຄົວເຮືອນ ທັງຢູ່ພາຍໃນ ປະເທດ ແລະ ຕ່າງປະເທດ.

## ຄວາມເປັນມາ

ການເວົ້າເຖິງການມີອາຊີບເປັນຜູ້ອອກແຮງງານໃນຄົວເຮືອນທີ່ໄດ້ຮັບຄ່າຈ້າງນັ້ນ ຕາມຄວາມຈິງແລ້ວຍັງເປັນສິ່ງຍັງແນມບໍ່ເຫັນໄດ້ເທື່ອຢູ່ຫລາຍໆປະເທດ, ເພາະສະນັ້ນ ຜູ້ອອກແຮງງານໃນຄົວເຮືອນຫລາຍຄົນຈິ່ງຕ້ອງທົນກັບສະພາບການເຮັດວຽກທີ່ພົບກັບອຸປະສັກຫລາຍຢ່າງ, ເຊັ່ນ : ໄດ້ຮັບຄ່າແຮງງານບໍ່ສົມກັບໜ້າວຽກ, ເຮັດວຽກແກ່ຍາວ, ໄດ້ຮັບການປະຕິບັດຕໍ່ດ້ວຍພຶດຕິກຳແບບຍາບຄາຍ, ບໍ່ມີຄວາມເປັນສ່ວນຕົວທີ່ເໝາະສົມ ແລະ ຖືກການກົດຂີ່ຂູດຮີດທາງເພດ. ຮ້າຍແຮງກວ່ານັ້ນ, ຜູ້ອອກແຮງງານໃນຄົວເຮືອນຈຳນວນນຶ່ງຍັງເປັນຜູ້ເຮັດວຽກຢ່າງໜັກໜ່ວງຄ້າຍຄື ແຮງງານແບບບັງຄັບ ຫລື ແຮງງານແບບທາດ. ຖ້າຜູ້ອອກແຮງງານໃນຄົວເຮືອນຍັງຢູ່ໃນໄວເດັກ, ການວ່າຈ້າງໃຫ້ເຮັດວຽກແບບນີ້ຖືວ່າເປັນການໃຊ້ແຮງງານເດັກແບບໂຫດຮ້າຍທີ່ສຸດອີກແບບນຶ່ງ.

ຜູ້ອອກແຮງງານໃນຄົວເຮືອນ ເຖິງຈະເປັນຄົນພາຍໃນປະເທດ ຫລື ຄົນຕ່າງດ້າວ ລ້ວນແຕ່ມີອຳນາດໃນການຕໍ່ລອງແບບຈຳກັດທີ່ສຸດ. ພວກເຂົາເຈົ້າບໍ່ສາມາດນຳໃຊ້ການບໍລິການທີ່ເປັນຂອງສາທາລະນະ ແລະ ເກືອບວ່າບໍ່ສາມາດທີ່ຈະຕໍ່ວ່າຕໍ່ຂານໃດໆກັບການກົດຂີ່ຂົ່ມເຫັງທີ່ເຂົາເຈົ້າໄດ້ຮັບ. ສ່ວນຜູ້ອອກແຮງງານຕ່າງດ້າວນັ້ນຍິ່ງໄດ້ຮັບຄວາມອັບປະໂຫຍດເປັນສອງທົບ,ເຊິ່ງບໍ່ພຽງແຕ່ຕົກຢູ່ໃນສະພາບຂອງການເຮັດວຽກທີ່ບໍ່ດີແລ້ວ ຍັງຖືວ່າເປັນບຸກຄົນເຂົ້າເມືອງຢ່າງຜິດກົດໝາຍ ແລະ ໂດຍທົ່ວໄປແລ້ວ ພວກເຂົາເຈົ້າເຫລົ່ານີ້ຍັງຖືເປັນບຸກຄົນທີ່ບໍ່ໄດ້ຮັບຄວາມເຫັນອົກເຫັນໃຈຈາກອຳນາດການປົກຄອງ ແລະ ປະຊາຊົນທ້ອງຖິ່ນຕື່ມອີກ.

ແຕ່ຄວາມເປັນຈິງແລ້ວ, ຜູ້ອອກແຮງງານໃນຄົວເຮືອນ - ບໍ່ວ່າຈະເປັນບຸກຄົນພາຍໃນປະເທດ ຫລື ເປັນຄົນຕ່າງດ້າວທີ່ເຂົ້າເມືອງຜິດກົດໝາຍ - ກໍລ້ວນແຕ່ເປັນຜູ້ສ້າງມູນຄ່າເພີ້ມໃຫ້ແກ່ເສດຖະກິດຂອງຊາດ. ຕາມທີ່ໄດ້ຮັບຮູ້ໃນໄລຍະຜ່ານມານັ້ນ ມີແມ່ຍິງຄົນລາວເຮົາເຮັດວຽກເປັນຜູ້ອອກແຮງງານປະເພດນີ້ນັບມື້ນັບຫລາຍຂື້ນ ແລະ ຄວາມຮຽກຮ້ອງຕ້ອງການແຮງງານເຫລົ່ານີ້ກໍນັບມື້ນັບສູງຂື້ນເລື້ອຍໆ. ນອກນັ້ນ, ຜູ້ອອກແຮງງານໃນຄົວເຮືອນຈຳນວນຫລວງຫລາຍຍັງສະແຫວງຫາວຽກເຮັດງານທຳແບບນີ້ຢູ່ຕ່າງປະເທດ.

ໃນເວລານີ້, ຢູ່ໃນຫລາຍໆປະເທດ ກໍໄດ້ສຽງຮຽກຮ້ອງຢ່າງເປັນຂະບວນ- ໂດຍສະເພາະແມ່ນສຽງຮຽກຮ້ອງຈາກສະຫະພັນກຳມະບານ ແລະ ອົງການຈັດຕັ້ງສັງຄົມອື່ນໆ - ໃຫ້ມີການປັບປຸງເງື່ອນໄຂການເຮັດວຽກຂອງຜູ້ອອກ

ແຮງງານເຫລົ່ານີ້, ພ້ອມທັງປົກປ້ອງຜູ້ທີ່ມີອາຍຸຍັງນ້ອຍ ແລະ ປົດປ່ອຍເດັກນ້ອຍເຫລົ່ານີ້ອອກຈາກການເຮັດວຽກງານປະເພດນີ້.

ຫ້ອງການຂອງອົງການແຮງງານສາກົນປະຈຳຂົງເຂດອາຊີ ແລະ ປາຊີຟິກ ໄດ້ຮ່ວມມືກັບ ບັນດາສະມາຊິກໃນລະບົບໄຕພາຄີຂອງຕົນ ພ້ອມທັງ ໄດ້ຊ່ວຍເຫລືອບັນດາສະມາຊິກເຫລົ່ານີ້ ກະກຽມເນື້ອໃນທີ່ຈະນຳໄປສະເໜີຕໍ່ກອງປະຊຸມອົງການແຮງງານສາກົນທີ່ຈະຈັດຂຶ້ນທີ່ ນະຄອນເຊີແນວ, ປະເທດສະວິດ ໃນເດືອນມິຖຸນາ 2010 ໜ້ານີ້. ເພື່ອເປັນທິດໃຫ້ແກ່ການຄົ້ນຄວ້າຄັ້ງນີ້, ອົງການແຮງງານສາກົນໄດ້ສົ່ງບົດລາຍງານກ່ຽວກັບກົດໝາຍ ແລະພາກປະຕິບັດທີ່ກ່ຽວຂ້ອງກັບຜູ້ອອກແຮງງານໃນຄົວເຮືອນຈາກປະເທດຕ່າງໆທົ່ວໂລກ,ພ້ອມກັບຄຳຖາມຈຳນວນນຶ່ງເພື່ອໃຫ້ປະເທດສະມາຊິກຂອງອົງການແຮງງານສາກົນໄດ້ຕອບຄຳຖາມເຫລົ່ານັ້ນ.

## ຕິດຕໍ່ພົວພັນ ແລະ ສອບຖາມຂໍ້ມູນເພີ່ມເຕີມໄດ້ຈາກ:

ກໍລະກົດ ແຫວນວັນຄຳ
ຜູ້ປະສານງານໂຄງການ
ອົງການ ILO/Gender RBSA Project
ໂທ: +856 (21) 251 745
ແຟກ: +856 (21) 216 983
Mob: +856 (20) 5599 182
EMail: vkolakot@yahoo.com
www.ilo.org/asia